ຈົດໝາຍເຖິງຄອບຄົວ: ໜັງສືແຈ້ງຂ່າວການຖືກກວດກາ ເພື່ອພິສູດ ຄວາມມີສິດໄດ້ຮັບຜົນປະໂຍດ

ຊື່ນັກຮຽນ:_____ໂຮງຮຽນ:_____ວັນທີ:_____

ສຳຄັນ: ທ່ານຕ້ອງຕອບຈົດໝາຍສະບັບນີ້

ຮຽນທ່ານ_____

ຖ້າຫາກວ່າທ່ານບໍ່ຕອບຈົດໝາຍສະບັບນີ້ ລູກຂອງທ່ານຈະບໍ່ໄດ້ກິນອາຫານຢູ່ໂຮງຮຽນຟຣີ ຫລືໃນຣາຄາທີ່ຫລຸດໃຫ້ອີກຕໍ່ໄປ. ຈົດໝາຍສະບັບນີ້ ບັງຄັບໃຫ້ທ່ານສົ່ງຂໍ້ມູນໄປໃຫ້ ຫລືຕິດຕໍ່ໄປຍັງທ່ານ_____ (official's name) ພາຍໃນວັນທີ_____ (date)

ຟອຣ່ມຄຳຮ້ອງຂໍກິນອາຫານຟຣີ ທີ່ທ່ານສົ່ງໄປເພື່ອຂໍໃຫ້ລູກຂອງທ່ານໄດ້ກິນອາຫານຟຣີ ຫລືໃນຣາຄາທີ່ຫລຸດໃຫ້ນັ້ນ ໄດ້ຖືກຄັດເລືອກສຳລັບກວດກາເບິ່ງຄືນ ເພື່ອໃຫ້ແນ່ໃຈວ່າ ມີແຕ່ນັກຮຽນຜູ້ທີ່ມີສິດ ແລະມີເງື່ອນໄຂຖືກຕ້ອງເທົ່ານັ້ນໄດ້ກິນອາຫານຟຣີ ຫລືໃນຣາຄາທີ່ຫລຸດໃຫ້.

ເພື່ອການກວດກາທີ່ວ່ານີ້ ທ່ານຕ້ອງສົ່ງອັນໃດອັນນຶ່ງໃນສອງສິ່ງຕໍ່ໄປນີ້ໃຫ້ພວກເຮົາ (1) ເອກກະສານທີ່ສະແດງວ່າທ່ານໄດ້ຮັບຟູດສະແຕມ ຫລືໄດ້ຮັບການຊ່ວຍເຫລືອຊົ່ວຄາວ ແກ່ຄອບຄົວທີ່ຂັດສົນ (TANF) ສຳລັບລູກຂອງທ່ານ ຫລື (2)ແຈ້ງຊື່ ແລະ ເລກສະວັດດີການສັງຄົມ(Social Security Number) ຂອງສະມາຊິກຄອບຄົວຜູ້ໃຫຍ່ແຕ່ລະຄົນໃນຟອຣ່ມ ທີ່ສອດມາພ້ອມນີ້ ແລະ ເອກກະສານທີ່ສະແດງເຖິງລາຍໄດ້ປັດຈຸບັນຂອງທັງໝົດຄອບຄົວຂອງທ່ານ.

ເຮົາໄດ້ແຈ້ງຂໍ້ມູນມາພ້ອມນີ້ ທີ່ບອກໃຫ້ຮູ້ວ່າທ່ານສາມາດໃຊ້ເອກກະສານແບບໃດເພື່ອສະແດງໃຫ້ເຫັນວ່າ ທ່ານໄດ້ຮັບຟູດສະແຕມ ຫລື TANF ສຳລັບລູກຂອງທ່ານຢູ່ເວລານີ້ ຫລືເພື່ອສະແດງລາຍໄດ້ຂອງໝົດທັງຄອບຄົວຂອງທ່ານ. ຖ້າເປັນໄປໄດ້, ຢ່າສົ່ງສຳເນົາຕົ້ນຂອງເອກກະສານເຫລົ່ານີ້ໄປໃຫ້ເຮົາ. ຖ້າທ່ານສົ່ງສຳເນົາຕົ້ນໄປທ່ານຈະບໍ່ໄດ້ ຮັບຄືນ ນອກຈາກວ່າທ່ານຈະຮ້ອງຂໍໄປ

ຖ້າທ່ານບໍ່ສົ່ງຂໍ້ມູນທີ່ສະແດງວ່າລູກຂອງທ່ານມີສິດທີ່ຈະໄດ້ກິນອາຫານຟຣີ ຫລືໃນຣາຄາທີ່ຫລຸດໃຫ້ພາຍໃນວັນທີ _____ (the date above) ລູກຂອງທ່ານກໍຈະບໍ່ໄດ້ຮັບຜົນປະໂຍດດ້ານອາຫານດັ່ງກ່າວນີ້ອີກຕໍ່ໄປ.